🎉ສຳເລັດຢ່າງຈົບງາມ! ຜ-ຟຟລ ຍົກລະດັບມາດຕະຖານສາກົນ ຝຶກອົບຮົມການກວດສອບພາຍໃນ ແລະ ຈັດຊື້-ຈັດຈ້າງ 📈



ວັນທີ 22-23 ຕຸລາ 2025 ທີ່ຜ່ານມາ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ຈັດການຝຶກອົບຮົມພາຍໃນຄັ້ງສຳຄັນ ວ່າດ້ວຍຫົວຂໍ້ "ການກວດສອບລະບົບຄຸ້ມຄອງພາຍໃນ ແລະ ການກວດສອບ ຈັດຊື້-ຈັດຈ້າງ" ທີ່ຫ້ອງປະຊຸມໃຫຍ່ຊັ້ນ 1 ຂອງ ລັດວິສາຫະກິດໄຟຟ້າລາວ.

ໃນພິທີເປີດ, ທ່ານ ສຸກສະຫວາດ ໂສສຸພັນ, ອຳນວຍການໃຫຍ່ ຜ-ຟຟລ, ໄດ້ເນັ້ນຢ້ຳວ່າ: "ວຽກງານກວດສອບແມ່ນໜຶ່ງໃນວຽກງານທີ່ສຳຄັນທີ່ສຸດຕໍ່ການດຳເນີນທຸລະກິດ, ເຊິ່ງມີບົດບາດສຳຄັນຕໍ່ແຜນປະຕິຮູບຮອບດ້ານຂອງ ຜ-ຟຟລ. ພວກເຮົາຕ້ອງມຸ່ງເນັ້ນໃຫ້ລະບົບການປະຕິບັດວຽກງານໃນທຸກຂົງເຂດມີຄວາມຖືກຕ້ອງ, ໂປ່ງໃສ, ກວດສອບໄດ້, ແລະ ມີມາດຕະຖານທຽບເທົ່າສາກົນ ຕາມວິໄສທັດ ແລະ ພາລະກິດຂອງບໍລິສັດ."

ເຖິງວ່າຈະໃຊ້ເວລາພຽງ 2 ວັນສັ້ນໆ, ການຝຶກອົບຮົມຄັ້ງນີ້ໄດ້ຮັບການເຂົ້າຮ່ວມຈາກຜູ້ທີ່ມີບົດບາດສຳຄັນຕໍ່ການເຄື່ອນໄຫວວຽກງານທົ່ວ ຜ-ຟຟລ.

ນັກສຳມະນາກອນທັງໝົດ 60 ທ່ານ, ລ້ວນແລ້ວແຕ່ເປັນຜູ້ບໍລິຫານລະດັບສູງ: ຄະນະຜູ້ອຳນວຍການຝ່າຍພາຍໃນສຳນັກງານໃຫຍ່, ພະນັກງານລະດັບພະແນກການ, ຄະນະຜູ້ອຳນວຍການເຂື່ອນ ທີ່ ຜ-ຟຟລ ຄຸ້ມຄອງ

ຜົນການຝຶກອົບຮົມໄດ້ສະແດງໃຫ້ເຫັນວ່າ ຫົວຂໍ້ທີ່ນຳມາຄົ້ນຄວ້າ ແລະ ຖອດຖອນບົດຮຽນແມ່ນສອດຄ່ອງກັບຈຸດປະສົງຂອງແຜນປະຕິຮູບ, ໂດຍສະເພາະແມ່ນການຍົກລະດັບວຽກງານກວດສອບ-ກວດກາທົ່ວ ຜ-ຟຟລ.





ເນື້ອໃນສຳຄັນທີ່ຜູ້ເຂົ້າຮ່ວມໄດ້ຮັບການສຶກສາໃນຄັ້ງນີ້ປະກອບດ້ວຍ:

1. ລະບົບຄວບຄຸມພາຍໃນ:
   - ຄວາມໝາຍ ແລະ ຄວາມສຳຄັນຂອງລະບົບຄວບຄຸມ.
   - ນຳໃຊ້ຄູ່ມືກວດສອບ ISSAI (International Standards of Supreme Audit Institutions) ແລະ ຫຼັກການຂອງ COSO (The Committee of Sponsoring Organizations of the Treadway Commission) ເຊິ່ງເປັນມາດຕະຖານສາກົນໃນການອອກແບບ, ດຳເນີນ ແລະ ປະເມີນລະບົບຄວບຄຸມພາຍໃນ.
2. ການກວດສອບຈັດຊື້-ຈັດຈ້າງ:
   - ຂັ້ນຕອນການກະກຽມ, ການດຳເນີນການ ແລະ ການສະຫຼຸບລາຍງານຜົນການກວດສອບ ຈັດຊື້-ຈັດຈ້າງ ຢ່າງເປັນລະບົບ.

ນອກຈາກນີ້, ຍັງໄດ້ເນັ້ນໃສ່ການແລກປ່ຽນບົດຮຽນເພື່ອໃຫ້ນັກສຳມະນາກອນສາມາດນຳໃຊ້ເຄື່ອງມືດ້ານກົດໝາຍ, ນິຕິກຳ ແລະ ມາດຕະຖານກວດສອບແຫ່ງລັດທີ່ກ່ຽວພັນໂດຍກົງກັບ ຜ-ຟຟລ.

ໃນພິທີປິດ, ທ່ານ ສຸກສະຫວາດ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນສຳເລັດຂອງການຝຶກອົບຮົມ ແລະ ໄດ້ມີການມອບໃບປະກາດສຳລັບຜູ້ເຂົ້າຮ່ວມທຸກທ່ານ ເພື່ອຢັ້ງຢືນການໄດ້ຮັບຄວາມຮູ້ ແລະ ພ້ອມນຳໄປຜັນຂະຫຍາຍເຂົ້າໃນວຽກງານຕົວຈິງ.

ຜ-ຟຟລ ຂໍຢືນຢັນວ່າ: ພວກເຮົາຍັງສືບຕໍ່ເອົາໃຈໃສ່ໃນການພັດທະນາບຸກຄະລາກອນ ແລະ ວຽກງານກວດສອບ-ກວດກາ ເພື່ອສ້າງຄວາມໝັ້ນຄົງ, ໂປ່ງໃສ, ແລະ ຍືນຍົງໃນທຸກການເຄື່ອນໄຫວ.